ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳເລັດການເຂົ້າຮ່ວມກອງປະຊຸມທະວິພາຄີ ປະຈຳປີ 2021
# ລະຫວ່າງ
# ທະນາຄານແຫ່ງສປປ ລາວ ແລະ ທະນາຄານແຫ່ງຊາດກຳປູເຈຍ







ກອງປະຊຸມທະວິພາຄີ ລະຫວ່າງ ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທະນາຄານແຫ່ງຊາດກຳປູເຈຍ (ທປຈ) ປະຈຳປີ 2021 ໄດ້ຈັດຂຶ້ນໃນ ວັນທີ 16 ທັນວາ 2021 ທີ່ນະຄອນພະນົມເປັນ, ຣາຊະອານາຈັກກຳປູເຈຍ ໂດຍການເປັນເຈົ້າພາບຂອງທະນາຄານແຫ່ງຊາດກຳປູເຈຍ ຊຶ່ງຝ່າຍຄະນະຜູ້ແທນຈາກ ທະນາຄານ ແຫ່ງ ສປປ ລາວ ນຳໂດຍ ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ຝ່າຍຄະນະຜູ້ແທນຈາກທະນາຄານແຫ່ງຊາດກຳປູເຈຍ ນຳໂດຍ ທ່ານ ເຈຍ ຈັນໂຕ ຜູ້ວ່າການທະນາຄານແຫ່ງຊາດກຳປູເຈຍ ພ້ອມດ້ວຍການນຳທັງສອງຝ່າຍຈາກສອງທະນາຄານກາງເຂົ້າຮ່ວມ.



ກອງປະຊຸມທະວິພາຄີ ໄດ້ຈັດຂຶ້ນທຸກປີ ເພື່ອຮັດແໜ້ນສາຍພົວພັນອັນແໜ້ນແຟ້ນ, ມິດຕະພາບ ແລະ ຍາວນານ ລະຫວ່າງ ສອງທະນາຄານກາງ ເພື່ອເປັນການສະຫຼຸບຕີລາຄາໝາກຜົນການຈັດຕັ້ງປະຕິບັດວຽກງານການພົວພັນຮ່ວມມືໃນຂະແໜງການເງິນ-ເງິນຕາສອງຝ່າຍ ໂດຍສະເພາະໃນຂົງເຂດການເງິນ-ການທະນາຄານ ຂອງສອງປະເທດ ສປປ ລາວ ແລະ ຣາຊະອານາຈັກກຳປູເຈຍ. ສຳລັບກອງປະຊຸມໃນປີນີ້, ໄດ້ມີການ ປຶກສາຫາລື ແລະ ແລກປ່ຽນຮ່ວມກັນໃນຫຼາຍບັນຫາສຳຄັນຕົ້ນຕໍ ຄື: ສະພາບເສດຖະກິດມະຫາພາກ ແລະ ການພັດທະນາຂະແໜງການທະນາຄານຂອງສອງປະເທດ, ມາດຕະການຕອບໂຕ້ຕໍ່ການແຜ່ລະບາດຂອງພະຍາດ COVID-19 ແລະ ການສົ່ງເສີມການລົງທຶນໃນທະນາຄານ ແລະ ສະຖາບັນການເງິນ, ການພັດທະນາລະບົບຊຳລະສະສາງ ແລະ ສະກຸນເງິນດິຈິຕອນ, ການຄຸ້ມຄອງເງິນຕາຕ່າງປະເທດ ລວມເຖິງການແລກປ່ຽນບົດຮຽນຮ່ວມກັນໃນບັນຫາອື່ນໆທີ່ທັງສອງ ຝ່າຍມີຄວາມສົນໃຈຮ່ວມກັນ. ນອກນີ້, ຍັງໄດ້ມີວາລະພົບປະລະຫວ່າງນັກທຸລະກິດລາວ ທີ່ໄດ້ມາເປີດບໍລິການຢູ່ ຣາຊະອານາຈັກກຳປູເຈຍ ກັບທະນາຄານກາງຂອງສອງປະເທດ ໃນກອງປະຊຸມໃນຄັ້ງນີ້.

ໃນໂອກາດເຂົ້າຮ່ວມກອງປະຊຸມໃນຄັ້ງນີ້, ທະນາຄານແຫ່ງ ສປປ ລາວ ຕາງໜ້າໃຫ້ລັດຖະບານ ແຫ່ງ ສປປ ລາວ ໄດ້ມອບຫຼຽນກາມິດຕະພາບ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 50 ປີ ໃຫ້ແກ່ທະນາຄານແຫ່ງຊາດກຳປູເຈຍ ເພື່ອສະແດງເຖິງມິດຕະພາບ ແລະ ການຮ່ວມມືທີ່ດີງາມຂອງສອງທະນາຄານກາງ.




ກອງປະຊຸມຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບ ຊຶ່ງສາມາດບັນລຸຜົນສຳເລັດຕາມລະດັບຄາດໝາຍ ໂດຍຜ່ານການປຶກສາຫາລື ແລະ ແລກປ່ຽນບົດຮຽນຮ່ວມກັນ. ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ຖືເປັນຂີດໝາຍອັນສຳຄັນໃນການເສີມຂະຫຍາຍສາຍພົວພັນຮ່ວມມື ຂອງສອງປະເທດ ເວົ້າລວມ, ເວົ້າສະເພາະກໍ່ຄື ສອງທະນາຄານກາງໃຫ້

ນັບມື້ນັບພັດທະນາກ້າວສູ່ລວງເລິກ ແລະ ປະກອບສ່ວນເຂົ້າໃນການສົ່ງເສີມການຄ້າ ແລະ ການລົງທຶນຂອງສອງ ປະເທດ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງຂຶ້ນ.




*ຂ່າວ-ພາບ: ຄະນະກອງປະຊຸມທະວິພາຄີ ທຫລ*

*ຢູ່ເມືອງລາວໃຊ້ເງິນກີບລາວ*